# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 22 ຕຸລາ 2023 (10-22-2023)

---

## ສິ່ງມະຫັສຈັນກ່ຽວຂ້ອງກັນບໍ່?

**ຈຸດສຳຄັນໃນບົດຮຽນ:** ສິ່ງມະຫັສຈັນແມ່ນພຣະເຈົ້າຊົງກະທຳທີ່ຊີ້ໄປຫາພຣະເຢຊູແລະຖວາຍພຣະກຽດແດ່ພຣະອົງ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ເຫດຜົນນຶ່ງທີ່ <u>ທິສດີວິວັດທະນາການຂອງດາຣ໌ວິນ</u> (Charles Darwin's Theory of Evolution) ເປັນທີ່ນິຍົມ ແມ່ນວ່າມັນຊ່ອຍໃຫ້ຜູ້ຄົນເຂົ້າໃຈເຖິງການມີຊີວິດຢູ່ໂດຍປາສຈາກການຊົງສະຖິດຢູ່ຂອງພຣະເຈົ້າ. ນັບຕັ້ງແຕ່ ຊາລສ໌ ດາຣ໌ວິນ ໄດ້ສເນີທິສດີຂອງລາວຄັ້ງທຳອິດ, ນັກວິທຍາສາດວິວັດທະນາການໄດ້ເຮັດວຽກຢ່າງກະຕືລືລົ້ນເພື່ອສະແດງໃຫ້ເຫັນວ່າ ວິທີການທັມມະຊາດສາມາດອະທິບາຍການມີຊີວິດຢູ່ຂອງສິ່ງທີ່ມີຊີວິດແລະຫຼາຍໆຮູບແບບຊີວິດຢູ່ໃນໂລກນີ້. <u>ປະເພດຂອງຫຼັກຖານ</u>ຕົ້ນຕໍທີ່ພວກເຂົາໃຊ້ໃນເຣື່ອງລາວມີດັ່ງນີ້:

- ສ່ວນທີ່ຍັງເຫຼືອຂອງສິ່ງມີຊີວິດວັດຖຸບູຮານ,
- ຊັ້ນຂອງຊາກພືດຊາກສັດ(fossil layers),
- ຄວາມຄ້າຍຄືກັນລະຫວ່າງສິ່ງມີຊີວິດຢູ່ໃນປະຈຸບັນ,
- ຄວາມຄ້າຍຄືກັນຂອງ ດີເອັນເອ (DNA),
- ຄວາມຄ້າຍຄືກັນຂອງຕົວອ່ອນ (embryos).

ບັນຫາມີຢູ່ວ່າບໍ່ມີອັນໃດອັນນຶ່ງໃນສິ່ງເຫຼົ່ານັ້ນສະແດງໃຫ້ເຫັນທາງວິທຍາສາດເຖິງຄວາມເປັນໄປໄດ້ທີ່ <u>ວິວັດທະນາການທາງທັມມະຊາດ</u>ເປັນຄວາມຈິງ. ການຕີຄວາມໝາຍຕາມທັມມະຊາດຂອງຫຼັກຖານຂອງພວກເຂົາເຈົ້າແມ່ນຂຶ້ນກັບຄວາມເຊື່ອທາງໂລກແບບທັມມະຊາດ, ບໍ່ແມ່ນຂຶ້ນກັບວິທຍາສາດ. ເວົ້າອີກຢ່າງນຶ່ງ, ແນວຄວາມຄິດຂອງການວິວັດທະນາການຂອງພວກເພິ່ນເປັນພຽງແຕ່ຄວາມເຊື່ອທາງສາສນາທີ່ບໍ່ມີພື້ນຖານທາງວິທະຍາສາດເລີຍ.

ພຣະຄັມພີສະແດງເຖິງຄວາມເຊື່ອທີ່ມີທັສນະຂອງໂລກທີ່ແຕກຕ່າງຢ່າງສິ້ນເຊີງທີ່ **<u>ພຣະເຈົ້າບໍ່ພຽງແຕ່ມີຊີວິດຢູ່, ແຕ່ພຣະອົງຊົງສາມາດພົວພັນກັບການຊົງສ້າງຂອງພຣະອົງໃນທາງທີ່ຢູ່ນອກກົດທັມມະຊາດ</u>**. ອັຄສາວົກ ໂຢຮັນ ໄດ້ໃຫ້ຄວາມຮູ້ທີ່ມີພລັງບາງຢ່າງແກ່ພວກເຮົາກ່ຽວກັບການຊົງໃຊ້ສິ່ງມະຫັສຈັນຂອງພຣະເຈົ້າໃນໂລກ.

*ເຣື່ອງໃດທີ່ທ່ານມັກຈະເລົ່າສູ່ຄົນຟັງກ່ຽວກັບຊ່ວງເວລາທີ່ບໍ່ໜ້າເຊື່ອ?*

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. <u>ໂຢຮັນ 10:22-26</u>

[22]ເວລານັ້ນເປັນລະດູໜາວພໍດີເປັນເທສການສລອງຖວາຍພຣະວິຫານໃນກຸງເຢຣູຊາເລັມ. [23]ສ່ວນພຣະເຢຊູກຳລັງຊົງສະເດັດໄປມາໃນ
ບໍລິເວນພຣະວິຫານທີ່ລະບຽງຂອງໂຊໂລໂມນ. [24]ພວກຢິວກໍພາກັນມາອ້ອມຮອບພຣະອົງແລ້ວທູນວ່າ, "ຈະໃຫ້ພວກເຮົາສົງສັຍຢູ່ເຖິງ
ປານໃດ? ຖ້າທ່ານເປັນພຣະຄຣິດຈົ່ງບອກໃຫ້ພວກເຮົາຮູ້ຄັກເສັຽ." [25]ພຣະເຢຊູຊົງຕອບເຂົາວ່າ, *"ເຮົາໄດ້ບອກທ່ານທັງຫລາຍແລ້ວ
ແລະພວກທ່ານບໍ່ເຊື່ອກິຈການທີ່ເຮົາໄດ້ເຮັດໃນພຣະນາມພຣະບິດາຂອງເຮົານັ້ນກໍເປັນພະຍານຢືນຢັນຝ່າຍເຮົາ.* [26]*ແຕ່ພວກທ່ານບໍ່ໄດ້
ເຊື່ອເພາະພວກທ່ານບໍ່ແມ່ນຝູງແກະຂອງເຮົາ.*

ພຣະເຢຊູໄດ້ຊົງເປັນຜູ້ເວົ້າທີ່ມີພລັງຢ່າງແນ່ນອນ, ແລະຫຼາຍຄົນໄດ້ເຊື່ອໃນພຣະອົງຍ້ອນຄຳສອນທີ່ມີອຳນາດແລະເລິກເຊິ່ງຂອງພຣະອົງ. ແຕ່ບໍ່ແມ່ນພຽງແຕ່ຖ້ອຍຄຳທີ່ເລິກເຊິ່ງຂອງພຣະອົງເທົ່ານັ້ນທີ່ໄດ້ຮັບຄວາມສົນໃຈຈາກຜູ້ຄົນ. ພຣະອົງຊົງພໍພຣະທັຍທີ່ຈະຊົງກະທຳສິ່ງມະຫັສຈັນນັ້ນຕໍ່ໜ້າພວກເຂົາເຈົ້າ. ທີ່ຈິງແລ້ວ, ກ່ອນເຫດການໃນບົດຮຽນພາກນີ້ ພຣະເຢຊູໄດ້ຊົງປົວຊາຍຄົນນຶ່ງຕາບອດແຕ່ມື້ເກີດ (ຢຮ 9:1-7). <u>ແຕ່ມະນຸດຊາດເບິ່ງຄືວ່າມີຄວາມສາມາດທີ່ໜ້າອັສຈັນທີ່ຈະບໍ່ສົນໃຈໃນສິ່ງທີ່ຖືກຕ້ອງທີ່ເຫັນຢູ່ຕໍ່ພວກເພິ່ນ **ຖ້າ**ມັນບໍ່ສອດຄ່ອງກັບສິ່ງທີ່ພວກເຂົາເຈົ້າເຊື່ອຢູ່ແລ້ວ</u>. ເຣື່ອງລາວໃນພຣະທັມ ໂຢຮັນ 10:22-39 ໄດ້ເກີດຂຶ້ນໃນລະຫວ່າງເທສການສລອງຖວາຍພຣະວິຫານຮານຸກກາ(HanuKkah) ໃນກຸງເຢຣູຊາເລັມ ໃນທ້າຍເດືອນພຶສຈິກາຫຼືຕົ້ນເດືອນທັນວາ. ໃນຂນະທີ່ພຣະເຢຊູຊົງດຳເນີນໄປມາໃນລະບຽງຂອງພຣະວິຫານ, ບັນດາຊາວຢິວໄດ້ຫຼຽວເຫັນພຣະອົງແລະໄດ້ເຂົ້າໄປອ້ອມຮອບພຣະອົງ. ຂນະທີ່ພວກເຂົາເຈົ້າເຮັດດັ່ງນັ້ນ, ພວກເພິ່ນໄດ້ເລີ່ມຕົ້ນຕັ້ງຄຳຖາມຕໍ່ພຣະອົງ. ໂດຍສະເພາະ, ພວກເຂົາເຈົ້າມົວເມົາຢູ່ກັບການຮູ້ວ່າພຣະອົງຊົງເປັນ **ພຣະເມຊີອາ** ຕາມຄຳສັນຍາໃນພຣະຄັມພີແລະ<u>ພວກເຂົາເຈົ້າໄດ້ສຸມໃສ່ຖາມພຣະອົງກ່ຽວກັບເຣື່ອງນີ້</u>.

ພຣະເຢຊູໄດ້ໂຕ້ຕອບວ່າພຣະອົງໄດ້ຊົງຕອບຄຳຖາມນັ້ນໄປແລ້ວ; ແຕ່ພວກເຂົາເຈົ້າບໍ່ໄດ້ສາມາດນຳຕົນເອງໃຫ້ເຂົ້າໃຈໃນຄວາມໝາຍການສິດສອນຂອງພຣະອົງ. ເຫດຜົນທີ່ພວກເພິ່ນມີຄວາມຍຸ້ງຍາກທີ່ຈະເຂົ້າໃຈພຣະອົງ ແມ່ນດ້ວຍເຫດວ່າພຣະອົງບໍ່ໄດ້ຊົງໃຫ້<u>ຄຳຕອບທີ່ສອດຄ່ອງກັບແນວຄວາມຄຶດ</u>ເຣື່ອງພຣະເມຊີອາຂອງພວກເຂົາເຈົ້າ. ເຖິງແມ່ນວ່າຫຼາຍຄົນໄດ້ເຫັນພຣະເຢຊູຊົງກະທຳສິ່ງມະຫັສຈັນແທ້ໆ, ຫຼືຢ່າງໜ້ອຍໄດ້ຍິນກ່ຽວກັບເຣື່ອງນີ້, ພວກເຂົາເຈົ້າກໍຍັງບໍ່ແນ່ໃຈ. ພຣະເຢຊູຊົງຮູ້ວ່າຄວາມເຊື່ອແລະເຈດຕະນາຂອງຜູ້ຄົນໃນຝູງຊົນນັ້ນຜິດ, ດັ່ງນັ້ນພຣະອົງຈຶ່ງຊົງຕຳນິການສອບຖາມໂດຍຊົງບອກພວກເຂົາເຈົ້າວ່າ: "*ເຮົາໄດ້ບອກທ່ານທັງຫລາຍແລ້ວ ແລະພວກທ່ານບໍ່ເຊື່ອ*" ແລະຈາກນັ້ນພຣະອົງໄດ້ຊົງເພີ່ມເຕີມດ້ວຍຄຳເວົ້າທີ່ໜ້າຕົກໃຈໃນ<u>ເຫດຜົນ</u>ທີ່ພວກເພິ່ນບໍ່ເຊື່ອ: **"<u>ເພາະພວກທ່ານບໍ່ແມ່ນຝູງແກະຂອງເຮົາ</u>".**

ດັ່ງນັ້ນ, ພຣະເຢຊູຊົງໝາຍຄວາມວ່າແນວໃດ? ໃນເມື່ອພຣະອົງຊົງກ່າວວ່າ: "ແຕ່ພວກທ່ານບໍ່ໄດ້ເຊື່ອເພາະພວກທ່ານບໍ່ແມ່ນຝູງແກະຂອງເຮົາ." ພວກເຂົາເຈົ້າບໍ່ໄດ້ແມ່ນຝູງແກະຂອງພຣະເຢຊູກໍເພາະວ່າ <u>ຄວາມເຊື່ອຂອງພວກເຂົາເຈົ້າບໍ່ໄດ້ສອດຄ່ອງກັບຄວາມເປັນຈິງຂອງພຣະເຈົ້າ</u>. ພວກເຂົາເຈົ້າໄດ້ກຳລັງຊອກຫາພຣະເມຊີອາ ແລະດ້ວຍເຫດວ່າຄຳສັ່ງສອນອັນເລິກເຊິ່ງຂອງພຣະເຢຊູແລະການມະຫັສຈັນທີ່ໜ້າອັສຈັນໃຈຂອງພຣະອົງ, ເບິ່ງຄືວ່າພຣະອົງຈະຊົງມີພຣະລັກສນະ(ຄຸນສົມບັດ)ທີ່ເໝາະສົມ. ແຕ່ຄຳນິຍາມ(ຄວາມໝາຍ)ຂອງພຣະເມຊີອາຂອງພວກເຂົາເຈົ້າແຕກຕ່າງຈາກຄວາມໝາຍທີ່ພຣະເຢຊູໄດ້ຊົງກຳລັງປະກາດຢູ່. ຄວາມເປັນພຣະເມຊີອາຂອງພຣະເຢຊູແມ່ນອີງໃສ່ພື້ນຖານມຸມມອງໂລກທີ່ແຕກຕ່າງກັນທັງໝົດ. <u>ແທນທີ່ຈະແນມເບິ່ງຄວາມສົນໃຈໄປທີ່ໂລກນີ້ຕາມທີ່ຜູ້ຄົນຄາດຫວັງ</u>, <u>ພຣະເຢຊູກຳລັງປະກາດພຣະຣາຊອານາຈັກຝ່າຍຈິດວິນຍານ</u>. ແຕ່ໜ້າເສັຽດາຍ, ຜູ້ຄົນໄດ້ປະຕິເສດສິ່ງທີ່ພຣະເຢຊູໄດ້ຊົງສເນີໃຫ້ຮັບເອົາ. ພຣະເຢຊູຊົງຖືກປະຕິເສດໃນປະຈຸບັນນີ້ ດ້ວຍເຫດຜົນດຽວກັນກັບພວກທີ່ໄດ້ປະຕິເສດພຣະອົງໃນສມັຍຂອງພຣະອົງ.

*ພວກເຮົາສາມາດຮຽນຮູ້ຫຍັງແດ່ກ່ຽວກັບພຣະເຢຊູໂດຍການເບິ່ງການມະຫັສຈັນຂອງພຣະອົງ?*

## 2. <u>ໂຢຮັນ 14:8-11</u>

*8 ຟີລິບທູນພຣະອົງວ່າ, "ນາຍເຈົ້າເອີຍ, ຂໍສະແດງພຣະບິດາໃຫ້ຂ້ານ້ອຍທັງຫລາຍໄດ້ເຫັນ ແລ້ວພວກຂ້ານ້ອຍກໍຈະພໍໃຈແລ້ວ." 9 ພຣະເຢຊູຊົງຕອບວ່າ, "ຟີລິບເອີຍ, ເຮົາໄດ້ຢູ່ກັບພວກທ່ານເຫິງມາເຖິງພຽງນີ້ ແລະພວກທ່ານຍັງບໍ່ຮູ້ຈັກເຮົາອີກຫລື? ຜູ້ທີ່ໄດ້ເຫັນເຮົາກໍໄດ້ເຫັນພຣະບິດາເຈົ້າ. ເປັນສັນໃດທ່ານຈຶ່ງກ່າວວ່າ, "ຂໍສະແດງພຣະບິດາໃຫ້ພວກຂ້ານ້ອຍເຫັນແດ່ທ້ອນ." 10 ທ່ານບໍ່ເຊື່ອຫລືວ່າເຮົານີ້ຢູ່ໃນພຣະບິດາເຈົ້າ ແລະພຣະບິດາເຈົ້າຊົງຢູ່ໃນເຮົາ? ຖ້ອຍຄຳທີ່ເຮົາກ່າວແກ່ທ່ານທັງຫລາຍນັ້ນ, ເຮົາບໍ່ໄດ້ກ່າວໂດຍລຳພັງເຮົາເອງ. ແຕ່ພຣະບິດາຜູ້ຊົງສະຖິດຢູ່ໃນເຮົາໄດ້ຊົງກະທຳພຣະຣາຊກິຈຂອງພຣະອົງ. 11 ຈົ່ງເຊື່ອເຮົາວ່າເຮົາຢູ່ໃນພຣະບິດາ ແລະພຣະບິດາຊົງຢູ່ໃນເຮົາ. ຖ້າບໍ່ດັ່ງນັ້ນ, ກໍຈົ່ງເຊື່ອເພາະກິຈການເຫລົ່ານັ້ນ.*

ມັນເປັນທີ່ເຂົ້າໃຈໄດ້ເມື່ອບັນດາຜູ້ທີ່ບໍ່ເຊື່ອບໍ່ໄດ້ຮັບຮູ້ພຣະຣາຊກິຈ(ວຽກງານ)ຂອງພຣະເຈົ້າໃນໂລກນີ້. ທ້າຍທີ່ສຸດ, ຄວາມເຊື່ອພື້ນຖານທີ່ສຸດຂອງພວກເຂົາເຈົ້າບໍ່ຍອມຮັບຮູ້ເຖິງການຊົງສະຖິດຂອງພຣະເຈົ້າໃນພຣະຄັມພີ. ພວກເພິ່ນເຊື່ອວ່າຄວາມເຊື່ອຂອງຄຣິສະ

ຕຽນແມ່ນການຈິນຕະນາການ(fantasy). ແນວໃດກໍຕາມ, ໃນພຣະທັມໂຢຮັນ ບົດທີ່ 14 ມັນແມ່ນບັນດາອັຄສາວົກຂອງອົງພຣະເຢຊູທີ່ໄດ້ລົ້ມລຸກຄຸກຄານກັບຄວາມໝາຍ**<u>ພຣະເມຊີອາ</u>**ຂອງພຣະເຢຊູ. ມັນບໍ່ໄດ້ແມ່ນເຫດຜົນທີ່ພວກເຂົາບໍ່ເຊື່ອແຕ່ແມ່ນເຫດຜົນທີ່ພວກເພິ່ນ<u>ຍັງບໍ່ເຂົ້າໃຈທັງໝົດ</u>ກ່ຽວກັບພຣະເມຊີອາຂອງພຣະອົງຢ່າງທ່ຽງແທ້. ໂດຍສະເພາະ, ບັນດາອັຄສາວົກໄດ້ລົ້ມລຸກຄຸກຄານກັບຄວາມເຂົ້າໃຈໃນຄວາມສັມພັນທະພາບຂອງພຣະເຢຊູກັບພຣະເຈົ້າອົງພຣະບິດາ. ພຣະເຢຊູຊົງໄດ້ບອກພວກເຂົາເຈົ້າວ່າ **<u>ພຣະອົງຊົງເປັນທາງດຽວເທົ່ານັ້ນ</u>**ໄປສູ່ພຣະບິດາ (ຢຮ 14:6). ແນ່ນອນ, ນີ້ບໍ່ແມ່ນຄັ້ງທຳອິດທີ່ພຣະເຢຊູຊົງໄດ້ເຊື່ອມຕໍ່ພຣະອົງເອງກັບພຣະເຈົ້າອົງພຣະບິດາ (ເບິ່ງ ຢຮ 5:19; 6:38; 10:15). ແຕ່ວ່າຟີລິບ ໄດ້ມີຄວາມປາຖນາຢຸດເຣື່ອງລາວນີ້: *"ຂໍສະແດງພຣະບິດາໃຫ້ຂ້ານ້ອຍທັງຫຼາຍໄດ້ເຫັນ ແລ້ວພວກຂ້ານ້ອຍກໍຈະພໍໃຈແລ້ວ."*

ພຣະເຢຊູຊົງຕ້ອງຜິດຫວັງທີ່ພວກອັຄສາວົກຍັງຄົງບໍ່ເຂົ້າໃຈແຕ່ພຣະອົງກໍ່ຊົງໄດ້ດຳເນີນໄປຢ່າງກົງໄປກົງມາເທົ່າທີ່ເປັນໄປໄດ້: *"ຜູ້ທີ່ໄດ້ເຫັນເຮົາກໍໄດ້ເຫັນພຣະບິດາເຈົ້າ."* ດ້ວຍເຫດນັ້ນ, ພຣະເຢຊູໄດ້ຊົງກ່າວຕໍ່ໄປໂດຍການຖາມຄຳຖາມທີ່ມີຖ້ອຍຄຳກ່ຽວກັບສິ່ງທີ່ບັນດາອັຄສາວົກເອງທີ່ໄດ້ຍິນ, ແລະໄດ້ເຫັນໃນລະຫວ່າງຊ່ວງເວລາທີ່ພວກເພິ່ນໄດ້ຢູ່ກັບພຣະອົງ. ພຣະເຢຊູໄດ້ຊົງສລຸບໂດຍການຕັກເຕືອນພວກເຂົາເຈົ້າວ່າ:*"ຈົ່ງເຊື່ອເຮົາວ່າເຮົາຢູ່ໃນພຣະບິດາ ແລະພຣະບິດາຊົງຢູ່ໃນເຮົາ."* ແຕ່ຊົງຮູ້ສຶກວ່າພວກເຂົາເຈົ້າຍັງຄົງລົ້ມລຸກຄຸກຄານຢູ່, ພຣະເຢຊູໄດ້ຊົງໃຫ້ຫຼັກຖານອີກອັນນຶ່ງທີ່ວ່າພຣະອົງຊົງເປັນພຣະເມຊີອາ. ພຣະອົງຊົງບອກພວກເພິ່ນວ່າ:*"ຖ້າບໍ່ດັ່ງນັ້ນ, ກໍຈົ່ງເຊື່ອເພາະກິຈການເຫລົ່ານັ້ນ."* <u>ສິ່ງມະຫັສຈັນທີ່ພຣະອົງໄດ້ຊົງກະທຳໄດ້ພິສູດຄວາມເຊື່ອມຕໍ່ຂອງພຣະເຢຊູກັບພຣະເຈົ້າພຣະບິດາ.</u>

ມັນເປັນສິ່ງສຳຄັນທີ່ຈະເຮັດໃຫ້ຄວາມເຊື່ອໃນມຸມມອງຂອງໂລກໃນພຣະຄັມພີໃຫ້ເປັນພື້ນຖານອັນສຳຄັນທີ່ສຸດ. ແລະມັນເປັນສິ່ງສຳຄັນເໝືອນກັນທີ່ຈະຮັບຮູ້ວ່າ ຄວາມເຊື່ອໃນພຣະຄັມພີບໍ່ພຽງແຕ່ເປັນເຣື່ອງຂອງຄວາມຮູ້ທາງສະຕິປັນຍາ(intellectual). ເພື່ອຈະຍຶດຖືທັສນະຂອງພຣະຄັມພີເປັນການສ່ວນຕົວ, ພວກເຮົາຕ້ອງດຳເນີນຊີວິດຢູ່ໃນ<u>ຄວາມສຳພັນສ່ວນຕົວຂອງພວກເຮົາກັບພຣະເຈົ້າ</u>ໃນຂນະທີ່ພວກເຮົາເດີນໄປກັບພຣະອົງທຸກວັນ. ພຣະເຢຊູໄດ້ຊົງຖາມຟີລິບວ່າ: *"ຟີລິບເອີຍ, ເຮົາໄດ້ຢູ່ກັບພວກທ່ານເຫິງມາເຖິງພຽງນີ້ແລະພວກທ່ານຍັງບໍ່ຮູ້ຈັກເຮົາອີກຫລື? "* **ກຸນແຈສຳລັບທັສນະຂອງໂລກໃນພຣະຄັມພີແມ່ນ ປະສົບການຄວາມສັມພັນສ່ວນຕົວທີ່ແທ້ຈິງກັບອົງພຣະເຢຊູ** <u>ສິ່ງທີ່ເປັນຄວາມຈິງສຳລັບພວກອັຄສາວົກຂອງພຣະເຢຊູແມ່ນເປັນຄວາມຈິງສຳລັບພວກເຮົາເຊັ່ນດຽວກັນ</u>.

*ອຸປສັກອັນໃດຂັດຂວາງບໍ່ໃຫ້ຫຼາຍຄົນຍອມຮັບຄວາມຈິງວ່າພຣະເຢຊູຊົງແມ່ນໃຜ?*

## 3. <u>ໂຢຮັນ 14:12-14</u>

12 *"ເຮົາບອກທ່ານທັງຫລາຍຕາມຄວາມຈິງວ່າ, ຜູ້ທີ່ເຊື່ອໃນເຮົາກໍຈະເຮັດກິຈການທີ່ເຮົາເຮັດຢູ່ນັ້ນເໝືອນກັນ. ແລະຜູ້ນັ້ນຈະເຮັດການ*
*ໃຫຍ່ກວ່ານັ້ນອີກ, ເພາະວ່າຝ່າຍເຮົາໄປເຖິງພຣະບິດາເຈົ້າ.* 13 *ສິ່ງໃດໆທີ່ທ່ານທັງຫລາຍຈະຂໍໃນນາມຂອງເຮົາ, ເຮົາກໍຈະເຮັດສິ່ງນັ້ນ*
*ເພື່ອວ່າພຣະບິດາເຈົ້າຈະຊົງໄດ້ຮັບພຣະກຽດຕິຍົດດ້ວຍພຣະບຸດ.* 14 *ຖ້າທ່ານທັງຫລາຍຂໍສິ່ງໃດຈາກເຮົາໃນນາມຂອງເຮົາ, ຝ່າຍເຮົາ*
*ກໍຈະເຮັດສິ່ງນັ້ນ.*

ໂດຍທົ່ວໄປແລ້ວ, ຜູ້ຄົນມັກຈະມີຄວາມເຂົ້າໃຈແຄບເກີນໄປກ່ຽວກັບສິ່ງມະຫັສຈັນ. ວັດຈະນານຸກົມພຣະຄັມພີຮູບປະກອບຂອງໂຮລແມນ(Holman Illustrated Bible Dictionary) ໃຫ້ຄຳຈຳກັດ **<u>ສິ່ງມະຫັສຈັນ</u>** ວ່າ: **"ເຫດການທີ່ກ່ຽວຂ້ອງກັບການຊົງກະທຳອັນຊົງພລັງຂອງພຣະເຈົ້າໃນທັນທີ ຊຶ່ງຖືກອອກແບບມາເພື່ອເປີດເຜີຍພຣະລັກສນະຂອງພຣະປະສົງຂອງພຣະອົງ."** ຮູບພາບສິ່ງມະຫັສຈັນທີ່ຄົນສ່ວນໃຫຍ່ມັກຈະມີຄື: ການປິ່ນປົວດ້ານຮ່າງກາຍ, ການຝ່າຝືນກົດໝາຍຂອງທັມມະຊາດ, ການຂັບໄລ່ຜີຮ້າຍອອກ, ແລະອື່ນໆອີກ. **<u>ແຕ່ສິ່ງມະຫັສຈັນທີ່ເລິກເຊິ່ງທີ່ສຸດແມ່ນການປ່ຽນແປງທີ່ເກີດຂຶ້ນໃນຊີວິດຂອງຄົນເຮົາເມື່ອພວກເຂົາເຈົ້າໄດ້ຕ້ອນຮັບເອົາອົງພຣະເຢຊູ.</u>** ພຣະເຢຊູບໍ່ຊົງເຮັດສິ່ງມະຫັສຈັນພຽງແຕ່ເຫັນແກ່ການສະແດງຣິດເດດອັນຍິ່ງໃຫຍ່ຂອງພຣະອົງ.

*ດ້ວຍວິທີໃດທີ່ພວກເຮົາສາມາດເຮັດວຽກງານທີ່ຍິ່ງໃຫຍ່ກວ່າທີ່ພຣະອົງໄດ້ຊົງກະທຳ?*

ໃນຂໍ້ທີ່ 13, ພຣະເຢຊູໄດ້ແບ່ງປັນແກ່ບັນດາພວກອັຄສາວົກຂອງພຣະອົງໃນແຮງຈູງໃຈສຳລັບວຽກງານທີ່ໜ້າອັສຈັນທີ່ພວກເຂົາເຈົ້າ

ຈະຕ້ອງເຮັດ ໃນຂນະທີ່ພວກເພິ່ນປະກາດຂ່າວປະເສີດໃນໂລກຫຼັງຈາກທີ່ພຣະອົງໄດ້ຊົງຈາກໄປແລ້ວ. ພຣະອົງໄດ້ຊົງບອກພວກເຂົາເຈົ້າວ່າ: *"ສິ່ງໃດໆທີ່ທ່ານທັງຫລາຍຈະຂໍໃນນາມຂອງເຮົາ, ເຮົາກໍຈະເຮັດສິ່ງນັ້ນ ເພື່ອວ່າພຣະບິດາເຈົ້າຈະຊົງໄດ້ຮັບພຣະກຽດຕິຍົດດ້ວຍພຣະບຸດ."* ແນວຄວາມຄິດທີ່ສຳຄັນອັນນຶ່ງທີ່ພຣະເຢຊູຊົງແບ່ງປັນຢູ່ນີ້ແມ່ນວ່າ ເມື່ອພວກເຂົາເຈົ້າທູນຂໍບາງສິ່ງບາງຢ່າງ, ພວກເຂົາເຈົ້າສົມຄວນທີ່ຈະທູນຂໍ "**ໃນນາມຂອງເຮົາ**." ໃນສມັຍນັ້ນ, ຊື່ຂອງບຸກຄົນໃດບຸກຄົນນຶ່ງຖືວ່າທຽບເທົ່າກັບບຸກຄົນນັ້ນ. ດັ່ງນັ້ນ, ໃນເມື່ອບັນດາອັຄສາວົກທູນຂໍສິ່ງໃດສິ່ງນຶ່ງ "ໃນນາມພຣະຄຣິດ" ພວກເພິ່ນຈະຂໍໂດຍອີງໃສ່ສິດອຳນາດຂອງພຣະອົງ. ໃນຂໍ້ທີ່ 14, ພຣະເຢຊູຊົງໄດ້ກ່າວຕໍ່ໄປວ່າ: "*ຖ້າທ່ານທັງຫລາຍຂໍສິ່ງໃດຈາກເຮົາໃນນາມຂອງເຮົາ, ຝ່າຍເຮົາກໍຈະເຮັດສິ່ງນັ້ນ.*" ນີ້ໝາຍຄວາມວ່າ: ພວກອັຄສາວົກຈຳເປັນຕ້ອງບໍ່ຂໍສິ່ງທີ່ບໍ່ສາມາດນຳຄວາມສງ່າຣາສີມາສູ່ພຣະເຈົ້າອົງພຣະບິດາ.

ແນ່ນອນ, ມີຫຼາຍຄັ້ງທີ່ພຣະເຈົ້າຈະຊົງໃຊ້ບັນດາຜູ້ຕິດຕາມຂອງພຣະອົງໃນທາງທີ່ມະຫັສຈັນ. ຄວາມຈິງອັນໜ້າເສົ້າໃຈກໍຄືຫຼາຍຄົນຍັງຄົງຈະບໍ່ຕອບສນອງຕໍ່ພຣະເຈົ້າ, ເຖິງແມ່ນວ່າພວກເຂົາເຈົ້າຈະເຫັນການອັສຈັນກໍຕາມ. ພຣະເຢຊູຊົງຮູ້ໃນຄວາມຈິງເຫຼົ່ານັ້ນໃນພຣະຄັມພີຄຳອຸປມາທີ່ພຣະອົງໄດ້ຊົງບອກໄວ້ໃນເຣື່ອງເສດຖີກັບລາຊະໂຣ. ຈາກນາຣົກ, ເສດຖີໄດ້ຂໍກາບໄຫວ້ ອັບຣາຮາມ ໃຫ້ສົ່ງລາຊະໂຣໄປຫາບັນດາອ້າຍເອື້ອຍນ້ອງຂອງລາວ ເພື່ອຊັກຊວນໃຫ້ພວກເຂົາເຈົ້າປ່ຽນແປງຊີວິດຂອງພວກເຂົາເຈົ້າເພື່ອວ່າພວກເພິ່ນຈະບໍ່ໄດ້ສິ້ນສຸດລົງໃນນາຣົກດັ່ງທີ່ຕົນເອງກຳລັງຕົກຢູ່ນັ້ນ. ອັບຣາຮາມໄດ້ບອກເສດຖີວ່າ: *"ຖ້າເຂົາບໍ່ຟັງໂມເຊແລະພວກຜູ້ປະກາດພຣະທັມເຖິງ ຈະມີຄົນນຶ່ງຄືນມາຈາກຕາຍເຂົາກໍບໍ່ຍອມເຊື່ອເໝືອນກັນ"* (ລກ 16:31). ສິ່ງສຳຄັນທີ່ສົມຄວນຈະຕ້ອງຮູ້ຄື: **ມັນບໍ່ແມ່ນການສະແດງສິ່ງມະຫັສຈັນທີ່ເປັນຈຸດໃຈກາງ, ແຕ່ແມ່ນການເຮັດໃຫ້ພຣະປະສົງຂອງອົງພຣະເຈົ້າສຳເລັດ.**

*ບາງຄັ້ງການອະທິຖານໃນພຣະນາມຂອງພຣະເຢຊູຖືກຕີຄວາມໝາຍຜິດແນວໃດ?*

## ນຳໃຊ້ໃນຊີວິດ

ສິ່ງມະຫັສຈັນແມ່ນພຣະເຈົ້າຊົງກະທຳທີ່ຊີ້ໄປຫາພຣະເຢຊູແລະຖວາຍພຣະກຽດແດ່ພຣະອົງ. ຈົ່ງໃຊ້ນຶ່ງໃນການນຳໃຊ້ຕໍ່ລົງໄປນີ້:

➢ **ຜະເຊີນໜ້າກັບຄວາມສົງສັຍ.** ຖ້າຫາກວ່າທ່ານລົ້ມລຸກຄຸກຄານກັບຄວາມເຊື່ອວ່າສິ່ງມະຫັສຈັນນັ້ນເປັນໄປໄດ້, ຈົ່ງພິຈາລະນາສິ່ງທີ່ຄວາມສົງສັຍຂອງທ່ານອາດຈະເວົ້າກ່ຽວກັບຄວາມເຊື່ອຂອງທ່ານໃນພຣະເຈົ້າ. ຈົ່ງເຕັມໃຈທີ່ຈະໄວ້ວາງໃຈວ່າພຣະເຈົ້າອົງຊົງມະຫິດທິຣິດສາມາດຊົງກະທຳສິ່ງມະຫັສຈັນ ແລະສິ່ງທີ່ພວກເຮົາບໍ່ສາມາດອະທິບາຍໄດ້.

➢ **ໂອບກອດເອົາສິ່ງມະຫັສຈັນໃນຊີວິດຂອງທ່ານ.** ສິ່ງມະຫັສຈັນທີ່ຍິ່ງໃຫຍ່ທີ່ສຸດທີ່ພຣະເຈົ້າຊົງກະທຳແມ່ນການປ່ຽນ ແປງທາງຈິດວິນຍານ ທີ່ພຣະອົງຊົງເຮັດຜ່ານທາງອົງພຣະຄຣິດໃນຊີວິດຂອງບັນດາຜູ້ທີ່ເຊື່ອວາງໃຈໃນພຣະອົງ. ຈົ່ງເຊື່ອວາງໃຈໃນອົງພຣະຄຣິດແລະປ່ອຍໃຫ້ພຣະອົງຊົງກະທຳສິ່ງມະຫັສຈັນປ່ຽນແປງທ່ານໃຫ້ເປັນຄົນຜູ້ໃຫມ່.

➢ **ແບ່ງປັນສິ່ງມະຫັສຈັນ.** ຈົ່ງປ່ອຍໃຫ້ຜູ້ຄົນໄດ້ເຫັນສິ່ງມະຫັສຈັນທີ່ພຣະເຈົ້າໄດ້ຊົງເຮັດໃນຊີວິດຂອງທ່ານ ແລະຈົ່ງກຽມພ້ອມທີ່ຈະແບ່ງປັນສິ່ງມະຫັສຈັນເຫຼົ່ານັ້ນແກ່ພວກເຂົາເຈົ້າ. "ແຕ່ໃນໃຈຂອງທ່ານທັງຫລາຍ, ຈົ່ງເຄົາຣົບນັບຖືພຣະຄຣິດວ່າເປັນອົງພຣະຜູ້ເປັນເຈົ້າ ຈົ່ງມີໃຈພ້ອມຢູ່ສເມີເພື່ອພວກທ່ານຈະສາມາດຕອບແກ້ຕົວໄດ້ ຕໍ່ທຸກຄົນທີ່ຖາມພວກທ່ານວ່າ: 'ທ່ານມີເຫດຜົນປະການໃດຈຶ່ງມີຄວາມຫວັງຢ່າງນີ້?'" (1 ປຕ 3:15).

**ອຸປຖັມໂດຍ ລາວຊາວເທິນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ SSK**